# Law on Investment Promotion

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 10
## Suspension of investment
## ການໂຈະການລົງທຶນ

**1. ຄວາມໝາຍ ການໂຈະການລົງທຶນ**

ການໂຈະການລົງທຶນແມ່ນການໂຈະກິດຈະການໃນການເຄື່ອນໄຫວການລົງທຶນ ເປັນການຊົ່ວຄາວ, ໝາຍຄວາມວ່າວິສາຫະກິດ ຫຼື ຫົວໜ່ວຍທຸລະກິດດັ່ງກ່າວບໍ່ສາມາດເຊັນສັນຍາ ຫຼື ບໍ່ສາມາດເຄື່ອນໄຫວດ້ານທຸລະກໍາທີ່ກ່ຽວກັບການລົງທຶນຂອງຕົນຈົນກວ່າຈະໝົດໄລຍະເວລາໃນການໂຈະ, ພາຍຫຼັງທີ່ໝົດໄລຍະເວລາໃນການໂຈະ, ວິສາຫະກິດ ຫຼື ຫົວໜ່ວຍທຸລະກິດດັ່ງກ່າວ ສາມາດກັບຄືນມາດໍາເນີນທຸລະກິດ ຫຼື ເຄື່ອນໄຫວລົງທຶນເປັນປົກກະຕິຖ້າຫາກວ່າ ບໍ່ມີການຍົກເລີກ ຫຼື ໂອນເປັນຢ່າງອື່ນ.

ການໂຈະການລົງທຶນຕ້ອງມີກໍານົດເວລາອັນແນ່ນອນ ເພື່ອຊອກຫາວິທີແກ້ໄຂ ຫຼື ປັບປຸງໃຫ້ຄືນສູ່ສະພາບປົກກະຕິ ໃນກໍລະນີທີ່ບໍ່ສາມາດແກ້ໄຂໄດ້ກິດຈະການນັ້ນຈະຖືກຍົກເລີກຕາມກົດໝາຍວ່າດ້ວຍວິສາຫະກິດ.

**2. ສາເຫດ ທີ່ພາໃຫ້ມີການໂຈະການລົງທຶນ**

ສາເຫດທີ່ພາໃຫ້ມີການໂຈະການລົງທຶນອາດຈະເກີດຈາກສາເຫດໃນຕົວຂອງຜູ້ລົງທຶນເອງສະໝັກໃຈໃນການໂຈະການລົງທຶນຂອງຕົນຕາມເຫດຜົນໃດໜຶ່ງ ເປັນຕົ້ນວ່າຍ້ອນຜົນກະທົບຂອງການແຜ່ລະບາດຂອງພະຍາດ COVID-19, ເກີດບັນຫາມີຂໍ້ຂັດແຍ່ງພາຍໃນວິສາຫະກິດຂອງຕົນ, ບັນຫາດ້ານການເງິນອັນເປັນສາເຫດບໍ່ສາມາດບືນຕົວໄປໄດ້, ບໍ່ສາມາດຜະລິດສິນຄ້າ, ບໍ່ສາມາດກະຈາຍສິນຄ້າ ແລະ ອື່ນໆທີ່ຈໍາເປັນ ຫຼື ອາດຈະໂຈະໂດຍອົງການຄຸ້ມຄອງການລົງທຶນເປັນຜູ້ສັ່ງໂຈະຍ້ອນບໍ່ປະຕິບັດພັນທະອັນໃດອັນໜຶ່ງ ເປັນຕົ້ນວ່າ: ຫຼົບຫຼີກການປະຕິບັດພັນທະດ້ານພາສີ-ອາກອນ ຫຼື ລະເມີດລະບຽບການໃນການເຄື່ອນໄຫວລົງທຶນ.

ສາເຫດທີ່ພາໃຫ້ມີການໂຈະການລົງທຶນ ບັນດານັກຄົ້ນຄວ້າທັງຫຼາຍອາດຈະມີຫຼາຍທັດສະນະ ແລະ ຫຼາຍມູມອງທີ່ແຕກຕ່າງກັນ ແຕ່ສໍາລັບຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນຂອງ ສປປ ລາວ ແລ້ວ ແມ່ນໄດ້ກໍານົດກ່ຽວກັບສາເຫດທີ່ພາໃຫ້ມີການໂຈະການລົງທຶນມີ 02 ສາເຫດຕົ້ນຕໍຄື: (1). ຕາມການສະເໜີຂອງຜູ້ລົງທຶນ, (2). ຕາມການສະເໜີຂອງຂະແໜງການທີ່ກ່ຽວຂ້ອງ ຫຼື ຕາມຄໍາເຫັນຂອງອົງການອອກໃບທະບຽນ[1].

- **ການໂຈະການລົງທຶນຕາມການສະເໜີຂອງຜູ້ລົງທຶນ:**

[1] ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016, ມາດຕາ 85.

ການໂຈະການລົງທຶນຕາມການສະເໜີຂອງຜູ້ລົງທຶນ ເປັນການໂຈະທີ່ເກີດຈາກຄວາມຕ້ອງການຂອງຜູ້ລົງທຶນເອງເນື່ອງຈາກສາເຫດຍ້ອນຫຼາຍປັດໃຈທີ່ພາໃຫ້ບໍ່ສາມາດດຳເນີນທຸລະກິດໄປໄດ້ ຫຼື ປະສົບບັນຫາດ້ານທຸລະກິດເປັນເປັນຕົ້ນແມ່ນ:

**+ ເກີດບັນຫາມີຂໍ້ຂັດແຍ່ງພາຍໃນວິສາຫະກິດຂອງຕົນ:**

ໃນເວລາວິສາຫະກິດມີຂໍ້ຂັດແຍ່ງ ຈຳເປັນຕ້ອງໄດ້ຮັບການແກ້ໄຂເພື່ອໃຫ້ການດຳເນີນທຸລະກິດສາມາດດຳເນີນໄປຢ່າງປອດໄພ ແລະ ຮັບປະກັນຄວາມຖືກຕ້ອງ ແລະ ມີປະສິດທິຜົນ, ຜູ້ລົງທຶນຈະເປັນເຈົ້າການໃນການນຳສະເໜີເຫດຜົນທີ່ຕ້ອງໄດ້ມີການແກ້ໄຂຂໍ້ຂັດແຍ່ງພາຍໃນວິສາຫະກິດຕົນຢ່າງເປັນລາຍລັກອັກສອນໃຫ້ຂະແໜງການທີ່ກ່ຽວຂ້ອງ ແລະ ອີງການອອກໃບທະບຽນຮັບຊາບເພື່ອຄົ້ນຄວ້າພິຈາລະນາໂຈະການລົງທຶນຕາມຄວາມເໝາະສົມ.

**+ ມີບັນຫາດ້ານການເງິນອັນເປັນສາເຫດບໍ່ສາມາດບືນຕໍ່ໄປໄດ້:**

ບັນຫາທາງດ້ານການເງິນແມ່ນໝາກຫົວໃຈຂອງການດຳເນີນທຸລະກິດ, ຖ້າຫາກວິສາຫະກິດໃດໜຶ່ງຫາກມີຄວາມຫຍຸ້ງຍາກດ້ານການເງິນ ແນ່ນອນຈະສົ່ງຜົນສະທ້ອນອັນໃຫຍ່ຫຼວງຕໍ່ກັບການຈັດການບໍລິຫານ, ການກະຈາຍການຜະລິດສິນຄ້າ, ຖ້າຂາດດ້ານການເງິນການຜະລິດສິນຄ້າກໍ່ອາດຈະຢຸດສະງັກ ຈຳເປັນຕ້ອງໄດ້ມີການໂຈະການເຄື່ອນໄຫວລົງທຶນໄວ້ກ່ອນເພື່ອແກ້ໄຂບັນຫາທີ່ເກີດຂຶ້ນ, ການໂຈະກໍເພື່ອມີເວລາໃນການແກ້ໄຂ ເພື່ອບໍ່ໃຫ້ນຳໄປສູ່ການລົ້ມລະລາຍ ຫຼື ຍົກເລີກການລົງທຶນທີ່ອາດຈະເກີດຜົນເສຍຫາຍຢ່າງໜັກໜ່ວງກວ່ານີ້.

**+ ບໍ່ສາມາດຜະລິດສິນຄ້າ:**

ສິນຄ້າແມ່ນຜະລິດຕະພັນທີ່ເກີດຂຶ້ນຈາກການລົງທຶນ, ແມ່ນປັດໃຈທີ່ຈະກໍ່ໃຫ້ເກີດການແລກປ່ຽນຊື້-ຂາຍ ແລະ ນຳມາຊຶ່ງຜົນກຳໄລ ແລະ ຜົນປະໂຫຍດແກ່ທຸກຝ່າຍ, ຖ້າຫາກວິສາຫະກິດ ຫຼື ບໍລິສັດໃດໜຶ່ງບໍ່ສາມາດຜະລິດສິນຄ້າໄດ້ແນ່ນອນການເຄື່ອນໄຫວລົງທຶນກໍຈະຖືກຢຸດສະງັກໄປໃນຕົວ, ຈຳເປັນຕ້ອງມີການໂຈະການລົງທຶນໄວ້ກ່ອນເພື່ອຊອກວິທີທາງ ແລະ ທິດທາງໃນການແກ້ໄຂບັນຫາທີ່ເກີດຂຶ້ນ.

**+ ບໍ່ສາມາດກະຈາຍສິນຄ້າ:**

ສິນຄ້າທີ່ໄດ້ຮັບການຜະລິດຂຶ້ນມາ ຖ້າຫາກບໍ່ສາມາດກະຈາຍ ຫຼື ຂາຍອອກສູ່ທ້ອງຕະຫຼາດໄດ້ ຈະສົ່ງຜົນກະທົບຢ່າງໃຫຍ່ຫຼວງໃນການໄດ້ມາເຊິ່ງລາຍຮັບ ຫຼື ຜົນກຳໄລຂອງວິສາຫະກິດ, ນັ້ນກໍໝາຍຄວາມວ່າ ການຜະລິດສິນຄ້າທີ່ໄດ້ລົງທຶນໄປບໍ່ໄດ້ຮັບປະສິດທິຜົນເທົ່າທີ່ຄວນ, ມີລາຍຈ່າຍ ແຕ່ພັດລາຍຮັບ ແລະ ຜົນກຳໄລພັດຂາດດຸນ, ເຮັດໃຫ້ການເຄື່ອນໄຫວຂອງວິສາຫະກິດພົບຄວາມຫຍຸ້ງຍາກ, ຖ້າຫາກຍັງບືນຕໍ່ຕໍ່ໄປກໍອາດຈະນຳໄປສູ່ການລົ້ມລະລາຍກໍເປັນໄດ້, ເພື່ອແກ້ໄຂບັນຫາດັ່ງກ່າວນັ້ນຈຳເປັນຕ້ອງມີການໂຈະການລົງທຶນໄວ້ກ່ອນເພື່ອຊອກວິທີແກ້ໄຂຕາມຂັ້ນຕອນ.

ນອກຈາກນັ້ນ, ຜູ້ລົງທຶນເປັນເຈົ້າການໃນການຂໍໂຈະການລົງທຶນ, ຊຶ່ງສາເຫດໃນຕົວດັ່ງກ່າວນັ້ນແມ່ນ:

+ ໃນເງື່ອນໄຂເສດຖະກິດຕະຫຼາດທີ່ມີການແຂ່ງຂັນຢ່າງຮຸນແຮງ ລະຫວ່າງ ຜູ້ລົງທຶນດ້ວຍກັນ, ມັນອາດຈະເກີດມີຝ່າຍໃດຝ່າຍໜຶ່ງເສຍໄຊໃນການດຳເນີນທຸລະກິດ. ສະນັ້ນ, ຝ່າຍທີ່ເສຍໄຊຈຶ່ງຈຳເປັນຕ້ອງໂຈະການເຄື່ອນໄຫວໃນໄລຍະໜຶ່ງ ເພື່ອໃຫ້ມີເວລາໃນການຟື້ນຟູເພື່ອຕໍ່ດຳເນີນທຸລະກິດຕໍ່ໄປພາຍຫຼັງທີ່ໄດ້ແກ້ໄຂບັນຫາຕ່າງໆໄດ້ແລ້ວ;

+ ອາດຈະແມ່ນຍ້ອນບຸກຄະລາກອນພາຍໃນວິສາຫະກິດ ຫຼື ການປ່ຽນແປງກ່ຽວກັບໂຄງຮ່າງການຈັດຕັ້ງຂອງວິາຫະກິດ, ຍົກຍ້າຍທີ່ຕັ້ງສຳນັກງານບ່ອນເຮັດວຽກຂອງວິສາຫະກິດ. ສະນັ້ນ, ຈຶ່ງຈຳເປັນຕ້ອງໂຈະການເຄື່ອນໄຫວລົງທຶນໄວ້ຊົ່ວຄາວເພື່ອແກ້ໄຂບັນຫາຕ່າງໆ;

+ ຫຼື ອາດຈະແມ່ນຍ້ອນຜູ້ລົງທຶນມີຄວາມຕ້ອງການໃນການປ່ຽນແປງທິດທາງໃນການດຳເນີນທຸລະກິດ, ເພື່ອສາມາດເຮັດໄດ້ສິ່ງດັ່ງກ່າວນີ້, ຜູ້ລົງທຶນ ຫຼື ວິສາຫະກິດຈຳຕ້ອງໂຈະການເຄື່ອນໄຫວລົງທຶນໄວ້ຊົ່ວຄາວ ເພື່ອມີເວລາໃນການຄົ້ນຄວ້າການຕະຫຼາດ, ກຳນົດທິດທາງໃນການພັດທະນາໃຫ້ຖືກຕ້ອງແນໃສ່ເພື່ອນຳມາຊຶ່ງປະສິດທິພາບສູງຂຶ້ນກວ່າເກົ່າ.

ທັງໝົດການໂຈະການລົງທຶນທີ່ເກີດຈາກຄວາມສະໝັກໃຈຂອງຜູ້ລົງທຶນຈະຕ້ອງບໍ່ແມ່ນການໂຈະເພື່ອຫວັງຫຼົບຫຼີກການປະຕິບັດພັນທະໃດໜຶ່ງທີ່ຂັດຕໍ່ລັດ ແລະ ສັງຄົມ.

- **ການໂຈະການລົງທຶນຕາມການສະເໜີຂອງຂະແໜງການທີ່ກ່ຽວຂ້ອງ ຫຼື ຕາມຄຳເຫັນຂອງອົງການອອກໃບທະບຽນ:**

ການໂຈະການລົງທຶນຕາມການສະເໜີຂອງຂະແໜງການທີ່ກ່ຽວຂ້ອງ ຫຼື ຕາມຄຳເຫັນຂອງອົງການອອກໃບທະບຽນ ເປັນການໂຈະແບບບັງຄັບກໍວ່າໄດ້ເພາະສ່ວນໃຫຍ່ແມ່ນຍ້ອນຜູ້ລົງທຶນເອງເປັນຜູ້ລະເມີດ ຫຼື ກະທຳຜິດໃນເວລາມີການເຄື່ອນໄຫວລົງທຶນຂອງຕົນເປັນຕົ້ນແມ່ນ ສ້າງຜົນກະທົບອັນບໍ່ດີທີ່ຮ້າຍແຮງຕໍ່ສະພາບແວດລ້ອມ, ເສດຖະກິດ-ສັງຄົມ ຫຼື ດຳເນີນທຸລະກິດທີ່ບໍ່ສອດຄ່ອງກັບກົດໝາຍ.

ໃນກົດໝາຍວ່າດ້ວຍວິສາຫະກິດ ຍັງໄດ້ກຳນົດວ່າ “ວິສາຫະກິດຕ້ອງເລີ່ມເຄື່ອນໄຫວພາຍໃນກຳນົດເກົ້າສິບວັນນັບແຕ່ວັນໄດ້ຂຶ້ນທະບຽນວິສາຫະກິດເປັນຕົ້ນໄປ. ຖ້າຫາກບໍ່ເຄື່ອນໄຫວພາຍໃນກຳນົດເວລາດັ່ງກ່າວ ຫຼື ຖ້າວິສາຫະກິດຫາກເຄື່ອນໄຫວແລ້ວແຕ່ຢຸດເຄື່ອນໄຫວ ແລະ ບໍ່ປະຕິບັດພັນທະດ້ານພາສີ, ອາກອນເປັນເວລາສິບສອງເດືອນຕິດຕໍ່ກັນໂດຍບໍ່ຮູ້ເຫດຜົນໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດທີ່ກ່ຽວຂ້ອງປະສານຂໍ້ມູນລະອຽດກັບເຈົ້າໜ້າທີ່ສ່ວນສາອາກອນທີ່ກ່ຽວຂ້ອງແລ້ວແຈ້ງໃຫ້ວິສາຫະກິດດັ່ງກ່າວເຂົ້າມາອະທິບາຍເຫດຜົນ, ຖ້າບໍ່ມາພົບພາຍໃນກຳນົດສິບວັນລັດຖະການນັບແຕ່ວັນໄດ້ຮັບແຈ້ງຫຼືມາພົບແຕ່ຄຳຕອບບໍ່ມີເຫດຜົນພຽງພໍວິສາຫະກິດທີ່ກ່ຽວຂ້ອງຈະຖືກພິຈາລະນາໃຫ້ໂຈະການເຄື່ອນໄຫວທຸລະກິດ....ຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນກົດໝາຍ”[2].

ໃນສະພາບການຕົວຈິງ, ການລະເມີດໃນການເຄື່ອນໄຫວທຸລະກິດ ຫຼື ລະເມີດຂໍ້ຫ້າມທີ່ກົດໝາຍ ແລະ ລະບຽບການໃນການຄຸ້ມຄອງເຄື່ອນໄຫວລົງທຶນ ເປັນຕົ້ນແມ່ນການບໍ່ປະຕິບັດພັນທະດ້ານພາສີ-ອາກອນ, ການລະເມີດຂໍ້ຫ້າມໃນແຕ່ລະໄລຍະ, ການປະຕິບັດເຄື່ອນໄຫວລົງທຶນບໍ່ຖືກຕາມຈຸດປະສົງ ແລະ ເປົ້າໝາຍຂອງການລົງທຶນທີ່ໄດ້ຈົດທະບຽນ, ມີຂໍ້ຂັດແຍ່ງພາຍໃນວິສາຫະກິດຂອງຕົນທີ່ບໍ່ສາມາດແກ້ໄຂໄດ້ຢູ່ພາຍໃນ ເມື່ອປະກົດມີບັນຫາດັ່ງກ່າວນີ້ແລ້ວ, ອົງການ ຫຼື ຂະແໜງການທີ່ກ່ຽວຂ້ອງຕ້ອງໄດ້ຄົ້ນຄວ້າຫາເຫດຜົນຢ່າງໜັກແໜ້ນກ່ອນໂຈະການລົງທຶນຕາມລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງ.

### 3. ຈຸດດີ ແລະ ຈຸດເສຍຂອງການໂຈະການລົງທຶນ

- **ຈຸດດີ:**

ການໂຈະການລົງທຶນໄດ້ສົ່ງຜົນສະທ້ອນໃຫ້ແກ່ການເຄື່ອນໄຫວການລົງທຶນໂດຍກົງ, ໃນນັ້ນມີທັງຈຸດດີ ແລະ ຈຸດເສຍ, ຈຸດດີຂອງການໂຈະການລົງທຶນໂດຍທົ່ວໄປແລ້ວກໍແມ່ນແນໃສ່:

+ **ເພື່ອປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງບຸກຄົນ, ການຈັດຕັ້ງ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງ:**

[2] ກົດໝາຍວ່າດ້ວຍວິສາຫະກິດ, ສະບັບເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013, ມາດຕາ 22.

ຜົນປະໂຫຍດອັນຊອບທຳແມ່ນສິ່ງທີ່ກໍ່ໃຫ້ເກີດການເຄື່ອນໄຫວດຳເນີນທຸລະກິດ ດຳເນີນໄປຢ່າງສະດວກ ແລະ ມີປະສິດທິຜົນ, ປັດສະຈາກຂໍ້ຂັດແຍ່ງທີ່ອາດຈະເກີດຂຶ້ນຈາກການລົງທຶນ, ບໍ່ມີການຮ້ອງຟ້ອງ, ຮ້ອງທຸກໆໃດໆອັນເປັນສາເຫດໃຫ້ການເຄື່ອນໄຫວລົງທຶນມີຄວາມເຂັ້ມແຂງ ແລະ ຄົງຕົວຢ່າງຍາວນານ.

**+ ເພື່ອຟື້ນຟູແກ້ໄຂການລະເມີດສິ່ງແວດລ້ອມຕາມການສະເໜີຂອງອົງການທີ່ມີສິດອຳນາດກ່ຽວຂ້ອງ:**

ໃນເວລາທີ່ຜູ້ລົງທຶນ ຫຼື ວິສາຫະກິດໃດໜຶ່ງຫາກມີການລະເມີດສ້າງຄວາມເສຍຫາຍຕໍ່ສິ່ງແວດລ້ອມ, ທຳລາຍມົນລະພິດ ແລະ ສະພາບແວດລ້ອມໃນການລົງທຶນ ຊຶ່ງມັນແຕະຕ້ອງເຖິງຊີວິດ ແລະ ສຸຂະພາບຂອງຄົນໃນສັງຄົມ ເນື່ອງຈາກການເຄື່ອນໄຫວລົງທຶນທີ່ບໍ່ຮັບປະກັນຕໍ່ການປົກປັກຮັກສາສິ່ງແວດລ້ອມ, ວິສາຫະກິດດັ່ງກ່າວຕ້ອງໄດ້ປັບປຸງແກ້ໄຂຕໍ່ກັບການປົກປັກຮັກສາ ແລະ ຟື້ນຟູສິ່ງແວດລ້ອມໃຫ້ກັບຄືນສູ່ປົກກະຕິ, ໃນກໍລະນີນີ້, ອົງການທີ່ມີສິດອຳນາດກ່ຽວຂ້ອງຕ້ອງໄດ້ດຳເນີນການສະເໜີໃຫ້ຟື້ນຟູແກ້ໄຂການລະເມີດສິ່ງແວດລ້ອມດັ່ງກ່າວ.

**+ ເພື່ອປະຕິບັດບັນດາມາດຕະການຮັບປະກັນຄວາມປອດໄພທາງດ້ານແຮງງານຕາມການສະເໜີຂອງອົງການທີ່ມີສິດອຳນາດກ່ຽວຂ້ອງ:**

ບັນດາມາດຕະການຮັບປະກັນຄວາມປອດໄພທາງດ້ານແຮງງານ ເປັນສິ່ງຕັດສິນຊີ້ຂາດໃນການຄົງຕົວ ແລະ ຂະຫຍາຍຕົວຂອງການເຄື່ອນໄຫວລົງທຶນ ເພາະທຸກກິດຈະການ ການລົງທຶນຈະດຳເນີນໄປໄດ້ດີ ແລະ ມີປະສິດທິຜົນກໍຕ້ອງອາໄສແຮງງານເປັນກ້ອນກຳລັງປະກອບສ່ວນເຂົ້າໃນການຈັດການບໍລິຫານ, ການຜະລິດໃຫ້ໄດ້ຮັບການດຳເນີນໄປຢ່າງເປັນປົກກະຕິ, ຖ້າຫາກແຮງງານບໍ່ມີຄວາມປອດໄພກໍໝາຍຄວາມວ່າກຳລັງແຮງໃນການເຄື່ອນໄຫວລົງທຶນກໍຈະອ່ອນແອ, ຊຶ່ງອາດຈະນຳໄປສູ່ການລົ້ມລະລາຍ ຫຼື ຍົກເລີກການເຄື່ອນໄຫວລົງທຶນກໍເປັນໄດ້. ສະນັ້ນ, ຈຶ່ງຈຳເປັນຕ້ອງໄດ້ໂຈະການລົງທຶນໄວ້ກ່ອນເພື່ອແກ້ໄຂໃຫ້ເຂົ້າສູ່ຄວາມປອດໄພຢ່າງເປັນປົກກະຕິ.

**+ ປະຕິບັດຕາມຄຳຕັດສິນ, ຄຳຕົກລົງຂອງສານ, ກຳມະການຕັດສິນ; ຜູ້ລົງທຶນບໍ່ປະຕິບັດຖືກຕາມໃບອະນຸຍາດ ຫຼື ໃບຢັ້ງຢືນການລົງທຶນທີ່ໄດ້ຈົດທະບຽນລົງທຶນ ແລະ ຖືກດຳເນີນມາດຕະການທາງດ້ານບໍລິຫານ ແຕ່ຍັງສືບຕໍ່ລະເມີດທາງດ້ານບໍລິຫານ:**

ການຈັດຕັ້ງປະຕິບັດຄຳຕັດສິນ, ຄຳຕົກລົງຂອງສານ, ກຳມະການຕັດສິນ ໃຫ້ເປັນຮູບປະທຳ ແມ່ນສິ່ງທີ່ຢັ້ງຢືນເຖິງໝາກຜົນຂອງຄວາມສັກສິດທາງດ້ານກົດໝາຍ, ຜູ້ລົງທຶນທີ່ບໍ່ປະຕິບັດຖືກການເຄື່ອນໄຫວລົງທຶນຖືກຕາມໃບອະນຸຍາດ ຫຼື ໃບຢັ້ງຢືນການລົງທຶນທີ່ໄດ້ຈົດທະບຽນ ແລະ ມີການລະເມີດບໍ່ປະຕິບັດຕາມລະບຽບການທາງດ້ານການຄຸ້ມຄອງ, ບໍລິຫານການລົງທຶນຈະສ້າງຜົນກະທົບອັນບໍ່ດີໃຫ້ແກ່ສັງຄົມ ກໍຄືຈະແຕະຕ້ອງເຖິງສິດ, ຜົນປະໂຍດອັນຊອບທຳຂອງລັດ, ການຈັດຕັ້ງ ແລະ ບຸກຄົນ ຈຳເປັນຕ້ອງມີການໂຈະການລົງທຶນໄວ້ກ່ອນຕາມກຳນົດເວລາໃດໜຶ່ງທີ່ແນ່ນອນເພື່ອຊອກວິທີແກ້ໄຂຕາມຄວາມເໝາະສົມ.

- **ຈຸດເສຍ:**

ໝາກຜົນຂອງການໂຈະການລົງທຶນໄດ້ສົ່ງຜົນສະທ້ອນອັນບໍ່ດີໃຫ້ແກ່ການເຄື່ອນໄຫວການລົງທຶນເປັນຕົ້ນແມ່ນ:

**+ ອາດສົ່ງຜົນສະທ້ອນໃຫ້ມີປະກົດການຫວ່າງງານເພີ່ມຂຶ້ນ:**

ການໂຈະການລົງທຶນອາດຈະສົ່ງຜົນສະທ້ອນໃຫ້ມີການຫວ່າງງານ, ຊຶ່ງວ່າການຫວ່າງງານແມ່ນໄພສັງຄົມທີ່ທຸກຄົນບໍ່ເພິ່ງປາດຖະໜາ ເພາະມັນໄດ້ສົ່ງຜົນກະທົບໂດຍກົງຕໍ່ກັບການຄົງຕົວ ແລະ ຂະຫຍາຍຕົວຂອງສັງຄົມ ເປັນຕົ້ນແມ່ນອາດຈະກໍ່ໃຫ້ເກີດມີປະກົດການຫຍໍ້ທໍ້ຕ່າງໆ ເຊັ່ນ: ການລັກ, ປຸ້ນຈີ້, ຄວາມອຶດຫິວ ແລະ ອື່ນໆ, ແຮງງານສ່ວນໃຫຍ່

ແມ່ນຂຶ້ນກັບບັນດາວິສາຫະກິດ ຫຼື ບໍລິສັດໃດໜຶ່ງເປັນຜູ້ຮັບປະກັນ ແລະ ມັກຈະທ້ອນໂຮມຢູ່ໃນໂຮງຈັກໂຮງງານ. ສະນັ້ນ, ຖ້າຫາກວ່າມີການໂຈະເຄື່ອນໄຫວການລົງທຶນກໍຈະເປັນບັນຫາເກີດມີໄພຫວ່າງງານເພີ່ມຂຶ້ນຢ່າງຫຼວງຫຼາຍໃນໄລຍະໜຶ່ງ.

+ **ຜະລິດຕະພັນສິນຄ້າຈະຖືກຢຸດສະງັກໄປໃນໄລຍະໜຶ່ງ:**

ສິນຄ້າແມ່ນປັດໃຈທີ່ກໍ່ໃຫ້ເກີດຜົນປະໂຫຍດໂດຍກົງຕໍ່ຜູ້ລົງທຶນ ແລະ ຜູ້ຊົມໃຊ້, ຖ້າຫາກມີການໂຈະການເຄື່ອນໄຫວລົງທຶນ, ສິນຄ້າກໍຈະບໍ່ໄດ້ຮັບການຜະລິດຢ່າງຕໍ່ເນື່ອງ ແນ່ນອນຈະສົ່ງຜົນກະທົບຢ່າງໃຫຍ່ຫຼວງຕໍ່ກັບການຄົງຕົວ ແລະ ຂະຫຍາຍຕົວຂອງວິສາຫະກິດ ກໍຄືຜູ້ລົງທຶນດັ່ງກ່າວ, ນອກນັ້ນ ຍັງຈະເຮັດໃຫ້ຜູ້ຊົມໃຊ້ບໍ່ສາມາດເຂົ້າເຖິງສິນຄ້າໄດ້ຢ່າງທົ່ວເຖິງ ແລະ ຂາດຄວາມສົມດຸນໃນການຂະຫຍາຍ ແລະ ກະຈາຍສິນຄ້າ ກໍຄືຜະລິດຕະພັນສິນຄ້າອອກສູ່ຕະຫຼາດຢ່າງກວ້າງຂວາງ.

+ **ມີຄວາມສ່ຽງທີ່ອາດຈະກໍ່ໃຫ້ເກີດບັນຫາການລົ້ມລະລາຍຂອງວິສາຫະກິດ:**

ການລົ້ມລະລາຍຂອງວິສາຫະກິດແມ່ນບັນຫາທີ່ຊີ້ໃຫ້ເຫັນວ່າກິດຈະການເຄື່ອນໄຫວການລົງທຶນໃນຂະແໜງດັ່ງກ່າວໄດ້ສິ້ນສຸດລົງ, ບັນຫາດັ່ງກ່າວນີ້ລັດຖະບານກໍຄືການຈັດຕັ້ງ ແລະ ບຸກຄົນບໍ່ເພິ່ງປາດຖະໜາໃຫ້ເກີດຂຶ້ນ ເພາະມັນໄດ້ທຳລາຍ ແລະ ສ້າງຄວາມເສຍຫາຍຢ່າງໜັກໜ່ວງຕໍ່ທຸກພາກສ່ວນທີ່ກ່ຽວຂ້ອງ ບໍ່ວ່າຈະດ້ານການຜະລິດສິນຄ້າ, ແຮງງານ, ຜົນປະໂຫຍດອື່ນໆກໍອາດຈະຖືກຢຸດຕິໄປໃນຕົວຖ້າຫາກວ່າບໍ່ສາມາດຟື້ນຟູໄດ້, ຜູ້ລົງທຶນເອງກໍຈະໄດ້ຮັບຜົນກະທົບໃນການຕົກເປັນຜູ້ລົ້ມລະລາຍ ຊຶ່ງຈະສົ່ງຜົນສະທ້ອນທາງດ້ານຄວາມສາມາດໃນການດຳເນີນທຸລະກິດຂອງຕົນ.

+ **ການເຊື່ອມຈອດລະຫວ່າງຂອດການຜະລິດແບບຕ່ອງໂສ້ອາດຈະຖືກຕັດຮອນບໍ່ໃຫ້ມີການເຄື່ອນໄຫວ ຫຼື ເອີ້ນວ່າບ່ອນໜຶ່ງໂຈະບ່ອນອື່ນກໍ່ຢຸດການເຄື່ອນໄຫວ:**

ການໂຈະການລົງທຶນບໍ່ພຽງແຕ່ຕະຕ້ອງເຖິງການເຄື່ອນໄຫວດຳເນີນກິດຈະການລົງທຶນພາຍໃນຂອງຕົນ ແຕ່ຍັງສົ່ງຜົນກະທົບເຖິງຄູ່ຮ່ວມມື ຫຼື ຄູ່ການຄ້າຂອງຕົນໃຫ້ມີຄວາມຫຍຸ້ງຍາກໄປນຳ ເພາະການລົງທຶນໄດ້ຕິດພັນກັບຫົວໜ່ວຍທຸລະກິດອື່ນ ເຊັ່ນ: ຜູ້ຜະລິດຕິດພັນກັບຜູ້ຈຳໜ່າຍ, ຜູ້ຈຳໜ່າຍຕິດພັນກັບຜູ້ຊື້, ຖ້າວ່າພາກສ່ວນໃດໜຶ່ງຫາກມີການໂຈະການເຄື່ອນໄຫວ ແນ່ນອນມັນກໍສົ່ງຜົນກະທົບໄປນຳກັນໝົດ.

+ **ລັດຖະບານ, ການຈັດຕັ້ງ, ບຸກຄົນທີ່ກ່ຽວຂ້ອງຈະສູນເສຍລາຍຮັບ:**

ລັດຖະບານ ເປັນຜູ້ສ້າງເງື່ອນໄຂ, ເອື້ອອຳນວຍຄວາມສະດວກ ແລະ ຊຸກຍູ້ສົ່ງເສີມໃຫ້ທຸກພາກສ່ວນມີການລົງທຶນໃຫ້ຫຼາຍ ແລະ ຈະໄດ້ຮັບຜົນປະໂຫຍດ ກໍຄືລາຍຮັບຈາກຜູ່ລົງທຶນຜ່ານການເກັບພາສີ-ອາກອນ ແລະ ຄ່າບໍລິການອື່ນໆຕາມລະບຽບການ, ຖ້າຫາກມີຜູ້ລົງທຶນຫຼາຍລັດຖະບານກໍຈະມີລາຍຮັບເພີ່ມຂຶ້ນຫຼາຍເທົ່ານັ້ນ, ແຕ່ແນ່ນອນຖ້າມີການໂຈະການລົງທຶນ, ລັດຖະບານກໍຕ້ອງມີນະໂຍບາຍດ້ານຕ່າງໆໃນເວລາທີ່ມີການໂຈະການລົງທຶນທີ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ຫຼື ບາງຄັ້ງຍັງຕ້ອງໄດ້ມີການທົດແທນຖ້າຫາກການໂຈະດັ່ງກ່າວແມ່ນເກີດຂຶ້ນຈາກຄວາມຜິດພາດ ຫຼື ເພື່ອແກ້ໄຂບັນຫາໃດໜຶ່ງທີ່ກ່ຽວຂ້ອງກັບຄວາມປອດໄພ ແລະ ໝັ້ນຄົງຂອງຊາດ.

+ **ສ້າງຄວາມຫຍຸ້ງຍາກໃຫ້ແກ່ອົງການຄຸ້ມຄອງການລົງທຶນໃນການແກ້ໄຂບັນຫາທີ່ເກີດຂຶ້ນ:**

ການໂຈະການລົງທຶນ ແມ່ນໄດ້ເພີ່ມຄວາມຫຍຸ້ງຍາກໃຫ້ແກ່ອົງການຄຸ້ມຄອງການລົງທຶນ ເພື່ອດຳເນີນຂັ້ນຕອນຕ່າງໆໃນການແກ້ໄຂບັນຫາທີ່ເກີດຂຶ້ນ, ແທນທີ່ການດຳເນີນເຄື່ອນໄຫວການລົງທຶນຂອງຜູ້ລົງທຶນຈະດຳເນີນໄປດ້ວຍດີ ແລະ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດຮ່ວມກັນ, ລັດຖະບານເປັນຜູ້ອຳນວຍຄວາມສະດວກ ແລະ ຄວາມປອດໄພໃນ

ການລົງທຶນ ແລະ ຜູ້ລົງທຶນກໍປະຕິບັດພັນທະຂອງຕົນຕາມລະບຽບການ ແຕ່ພັດຕ້ອງມາເສຍເວລາໃນການດຳເນີນຂັ້ນຕອນການໂຈະ ແລະ ເສຍເວລາໃນການແກ້ໄຂບັນກາໃນເວລາໂຈະເພື່ອໃຫ້ສາມາດຟື້ນຟູຄືນເຄື່ອນໄຫວຕາມປົກກະຕິ.

**4. ຂັ້ນຕອນການໂຈະການລົງທຶນ**

• **ກໍລະນີຕາມການສະເໜີຂອງຜູ້ລົງທຶນ**:

+ **ບາດກ້າວທີ 1:** ຜູ້ລົງທຶນກະກຽມເອກະສານ, ຮ່າງໜັງສືລາຍງານເຫດຜົນ, ຈຸດປະສົງ ແລະ ໄລຍະເວລາຂອງການສະເໜີໂຈະການລົງທຶນຢ່າງເປັນລາຍລັກອັກສອນ;

+ **ບາດກ້າວ ທີ 2:** ຜູ້ລົງທຶນນຳສົ່ງເອກະສານ, ໜັງສືລາຍງານເຫດຜົນ, ຈຸດປະສົງ ແລະ ໄລຍະເວລາຂອງການສະເໜີໂຈະການລົງທຶນໃຫ້ແກ່ອົງການທີ່ອະນຸຍາດລົງທຶນ ແລະ ອອກໃບທະບຽນ ເພື່ອຄົ້ນຄວ້າພິຈາລະນາໂຈະການລົງທຶນຕາມຄວາມເໝາະສົມຂອງອົງການທີ່ອະນຸຍາດລົງທຶນ;

+ **ບາດກ້າວທີ 3:** ອົງການທີ່ອະນຸຍາດລົງທຶນ ແລະ ອອກໃບທະບຽນວິສາຫະກິດຕ້ອງປະສານງານກັບຂະແໜງການທີ່ກ່ຽວຂ້ອງ ພ້ອມກຳນົດເວລາຢ່າງຄັກແດ່ ເພື່ອກວດກາປະເມີນຜົນກ່ອນພິຈາລະນາອະນຸມັດໃຫ້ໂຈະ.

• **ກໍລະນີຕາມການສະເໜີຂອງຂະແໜງການທີ່ກ່ຽວຂ້ອງ**:

ຍ້ອນຜູ້ລົງທຶນ ຫຼື ວິສາຫະກິດບໍ່ປະຕິບັດຕາມເປົ້າໝາຍການລົງທຶນ ຫຼື ດຳເນີນທຸລະກິດບໍ່ໄປຕາມສັນຍາ ຫຼື ລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ອົງການທີ່ອະນຸຍາດລົງທຶນ ແລະ ອອກໃບທະບຽນວິສາຫະກິດຕ້ອງດຳເນີນຂັ້ນຕອນ ແລະ ມາດຕະການໃນການແກ້ໄຂບັນຫາໃນການໂຈະການລົງທຶນຢ່າງສົມເຫດສົມຜົນ ແລະ ຫຼັກຖານທີ່ໜັກແໜ້ນເປັນຕົ້ນແມ່ນ:

+ **ບາດກ້າວທີ 1:** ຄົ້ນຄວ້າ, ປະຊຸມ, ປຶກສາຫາລືພາຍໃນຄະນະຮັບຜິດຊອບຕໍ່ກັບເຫດຜົນໃນການສັ່ງໂຈະ ແລະ ຜົນກະທົບທີ່ອາດຈະເກີດຂຶ້ນ;

+ **ບາດກ້າວທີ 2:** ແຈ້ງເຕືອນເປັນລາຍລັກອັກສອນໂດຍມີກຳນົດເວລາຢ່າງຄັກແດ່ ໃຫ້ຜູ້ລົງທຶນ ເພື່ອໃຫ້ຜູ້ລົງທຶນແກ້ໄຂ ຫຼື ປັບປຸງໃຫ້ຖືກຕ້ອງ;

+ **ບາດກ້າວທີ 3:** ໃນກໍລະນີທີ່ບໍ່ສາມາດແກ້ໄຂໄດ້ ຕາມກຳນົດເວລາທີ່ໄດ້ຕົກລົງກັນ ການລົງທຶນດັ່ງກ່າວ ກໍຈະຖືກສັ່ງໃຫ້ໂຈະຕາມລະບຽບການ.

**ສິ່ງທີ່ຄວນເອົາໃຈໃສ່:** ກຳນົດເວລາໃນການໂຈະການລົງທຶນຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນແມ່ນບໍ່ໄດ້ກຳນົດລະອຽດ, ແຕ່ດ້ານຫຼັກການແລ້ວ ກຳນົດເວລາໃນການໂຈະການລົງທຶນຂອງຜູ້ລົງທຶນແມ່ນອີງຕາມການສະເໜີຂອງຜູ້ລົງທຶນ ແລະ ຄຳຕົກລົງຂອງອົງການທີ່ອະນຸຍາດລົງທຶນ ແລະ ອອກໃບທະບຽນເປັນຜູ້ກຳນົດ, ໃນກໍລະນີການໂຈະລົງທຶນຂອງຜູ້ລົງທຶນຕາມຄຳຕົກລົງ, ຄຳຕັດສິນຂອງສານ, ກຳມະການຕັດສິນ, ກຳນົດເວລາໂຈະການລົງທຶນແມ່ນໄດ້ກຳນົດໃນຄຳຕົກລົງ, ຄຳຕັດສິນຂອງສານ, ກຳມະການຕັດສິນ.

**References:**


1. ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016;
2. ຕຳລາຮຽນວິຊາກົດໝາຍສົ່ງເສີມການລົງທຶນ, ສະຖາບັນຍຸຕິທຳແຫ່ງຊາດ, ປີ 2021;
3. ກົດໝາຍວ່າດ້ວຍວິສາຫະກິດ, ສະບັບເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013.